NSW GOVERNMENT

# What do I need to know if my child gets a formal caution?

Parent/carer information

# ຂ້ອຍຕ້ອງຮູ້ຫຍັງແດ່ຖ້າລູກຂອງຂ້ອຍໄດ້ຮັບການເຕືອນຢ່າງເປັນທາງການ?

## ຂໍ້ມູນສຳລັບພໍ່ແມ່/ຜູ້ດູແລ

### ການເຕືອນຢ່າງເປັນທາງການສຳລັບຄວາມປະພຶດອັນເປັນທີ່ກັງວົນແມ່ນຫຍັງ?

ຄວາມປະພຶດອັນເປັນທີ່ກັງວົນແມ່ນບາງສິ່ງບາງຢ່າງທີ່ຜູ້ໃດຜູ້ໜຶ່ງເຮັດທີ່ອາດຈະເປັນອັນຕະລາຍ ຫຼື ກໍ່ໃຫ້ເກີດອັນຕະລາຍຕໍ່ຕົນເອງ ຫຼື ຜູ້ອື່ນ. ການເຕືອນຢ່າງເປັນທາງການບອກນັກຮຽນວ່າຄວາມປະພຶດຂອງພວກເຂົາໄດ້ກໍ່ໃຫ້ເກີດ ຫຼື ອາດຈະເຮັດໃຫ້ເກີດອັນຕະ ລາຍ ຫຼື ອັນຕະລາຍຕໍ່ຕົນເອງ ແລະ ຜູ້ອື່ນ ຫຼື ມີຄວາມສ່ຽງທີ່ບໍ່ເປັນທີ່ຍອມຮັບໄດ້ຕໍ່ກັບການຮຽນ-ການສອນ. ມັນຖືກອອກແບບມາເພື່ອໃຫ້ທ່ານ ແລະ ລູກຂອງທ່ານຮູ້ວ່າຄວາມປະພຶດຂອງພວກເຂົາຕ້ອງຖືກປັບປຸງ.

ການເຕືອນຢ່າງເປັນທາງການແມ່ນຈົດໝາຍຊຶ່ງໃນນັ້ນໄດ້ບັນທຶກຄວາມປະພຶດອັນເປັນທີ່ກັງວົນຂອງລູກທ່ານ. ເທື່ອນີ້ ລູກຂອງທ່ານຈະບໍ່ຖືກສັ່ງພັກຮຽນ.

### ຈະເກີດຫຍັງຂຶ້ນຖ້າລູກຂອງຂ້ອຍໄດ້ຮັບການເຕືອນຢ່າງເປັນທາງການ?

ໂຮງຮຽນຈະປຶກສາຫາລືກ່ຽວກັບຄວາມປະພຶດອັນເປັນທີ່ກັງວົນ ແລະອະທິບາຍເລື້ອງການເຕືອນຢ່າງເປັນທາງການແກ່ລູກຂອງທ່ານ. ທ່ານຄູໃຫຍ່ຍັງຈະໃຫ້ສຳເນົາຂອງການເຕືອນຢ່າງເປັນທາງການເປັນລາຍລັກອັກສອນແກ່ທ່ານອີກດ້ວຍ.

ຈຸດປະສົງຂອງການເຕືອນຢ່າງເປັນທາງການແມ່ນເພື່ອໃຫ້ທ່ານແລະລູກຂອງທ່ານໃຊ້ເວລາທຳຄວາມເຂົ້າໃຈຜົນກະທົບຂອງຄວາມປະພຶດຂອງພວກເຂົາ ແລະ ຕົກລົງເຫັນດີກ່ຽວກັບແຜນການສະໜັບສະໜູນເພື່ອເຂົ້າຮ່ວມໃນບັນດາຍຸດທະສາດສະ ໜັບສະໜູນຄວາມປະພຶດໃນທາງບວກ. ທາງໂຮງຮຽນຈະໃຫ້ໂອກາດທ່ານ ແລະ ລູກຂອງທ່ານໄດ້ພົບກັບພວກເຂົາເພື່ອປຶກສາຫາລືກ່ຽວກັບຄວາມປະພຶດ ແລະ ວາງແຜນ ຫຼື ທົບທວນຄືນການສະໜັບສະໜູນທີ່ລູກທ່ານຕ້ອງການ.

ທ່ານສາມາດເອົາຄົນສະໜັບສະໜູນໄປຮ່ວມປະຊຸມກັບໂຮງຮຽນໄດ້.

ການເຕືອນຢ່າງເປັນທາງການແມ່ນນຳໃຊ້ໄດ້ສູງເຖິງ 50 ວັນຮຽນ. ໃນຊ່ວງເວລານີ້ ລູກຂອງທ່ານອາດຈະຖືກພັກຮຽນຖ້າຄວາມປະພຶດເກີດຂຶ້ນອີກ ຫຼື ສຳລັບຄວາມປະພຶດທີ່ໜ້າເປັນຫ່ວງ.

### ຂ້ອຍຈະເຮັດແນວໃດຖ້າລູກຂອງຂ້ອຍໄດ້ຮັບການເຕືອນຢ່າງເປັນທາງການ?

ເດັກເກືອບທຸກຄົນບາງຄັ້ງຈະເຮັດສິ່ງທີ່ບໍ່ປະຕິບັດຕາມກົດລະບຽບຂອງໂຮງຮຽນ ຫຼື ກົດຄວາມປະພຶດສຳລັບນັກຮຽນ. ບາງຄັ້ງ, ເມື່ອເຫດການນີ້ເກີດຂຶ້ນ, ຈະມີການເຕືອນຢ່າງເປັນທາງການ. ມີຂໍ້ມູນເພີ່ມເຕີມໄວ້ໃຫ້ກ່ຽວກັບ ສິ່ງທີ່ຕ້ອງເຮັດຖ້າລູກຂອງທ່ານມີບັນຫາຢູ່ໃນໂຮງຮຽນ.

ຖ້າລູກຂອງທ່ານໄດ້ຮັບການເຕືອນຢ່າງເປັນທາງການ, ນີ້ຫມາຍຄວາມວ່າມີຄວາມປະພຶດທີ່ຕ້ອງການຄວາມໃສ່ໃຈ. ການພົວພັນກັບທາງໂຮງຮຽນຂອງທ່ານເປັນສິ່ງສຳຄັນທີ່ສຸດໃນການຈັກການຄວາມປະພຶດຂອງລູກທ່ານແລະພັດທະນາການແກ້ໄຂຮ່ວມກັນ. ໂອ້ລົມກັບທ່ານຄູໃຫຍ່ຂອງໂຮງຮຽນກ່ຽວກັບການເຕືອນຢ່າງເປັນທາງການ ແລະ ເຮັດວຽກຮ່ວມກັບທີມງານທີ່ສະໜັບສະໜູນລູກຂອງທ່ານທີ່ຈະມາຫາວິທີແກ້ໄຂບາງຢ່າງ.

### ຈະເປັນແນວໃດຖ້າຄວາມປະພຶດດັ່ງກ່າວເກີດຂຶ້ນອີກ?

ຖ້າຄວາມປະພຶດອັນເປັນທີ່ກັງວົນ ເກີດຂຶ້ນອີກພາຍໃນ 50 ມື້ຮຽນຂອງການເຕືອນຢ່າງເປັນທາງການ, ທ່ານຄູໃຫຍ່ອາດຈະຕັດສິນໃຈສັ່ງພັກຮຽນລູກຂອງທ່ານ.  ການຕັດສິນໃຈສັ່ງ. ການຕັດສິນໃຈສັ່ງພັກຮຽນລູກຂອງທ່ານຈະເກີດຂຶ້ນພຽງແຕ່ຫຼັງຈາກທ່ານຄູໃຫຍ່ເບິ່ງຄວາມປະພຶດ ແລະຄວາມຕ້ອງການສ່ວນບຸກຄົນຂອງລູກຂອງທ່ານແລະເດັກຄົນ ອື່ນໆ. ມີຂໍ້ມູນກ່ຽວກັບການສັ່ງພັກຮຽນນັກຮຽນໄວ້ໃຫ້.

### ຂ້ອຍຈະເຮັດແນວໃດຖ້າຂ້ອຍຍັງມີຄວາມກັງວົນຢູ່?

ຖ້າທ່ານມີຄວາມກັງວົນກ່ຽວກັບການຮຽນ, ຄວາມປະພຶດ ຫຼື ຄວາມຢູ່ດີຂອງລູກທ່ານຢູ່ໃນໂຮງຮຽນ, ບ່ອນທີ່ດີທີ່ສຸດທີ່ຈະເລີ່ມຕົ້ນແມ່ນການໂອ້ລົມກັບຄູສອນ, ຜູ້ຊ່ວຍທ່ານຄູໃຫຍ່ ຫຼື ຮອງທ່ານຄູໃຫຍ່. ບັນຫາສ່ວນໃຫຍ່ສາມາດແກ້ໄຂໄດ້ໂດຍການເວົ້າກັບຄົນທີ່ຮູ້ຈັກລູກຂອງທ່ານໃຫຍ່. ບັນຫາສ່ວນໃຫຍ່ສາມາດແກ້ໄຂໄດ້ໂດຍການເວົ້າກັບຄົນທີ່ຮູ້ຈັກລູກຂອງທ່ານແລະສະຖານະການ.

ບາງຄັ້ງທ່ານອາດຈະຕ້ອງລົມກັບຄົນອື່ນ. ອື່ນໂຮງຮຽນຂອງທ່ານສາມາດໃຫ້ຂໍ້ມູນເພື່ອຕິດຕໍ່ກັບຫ້ອງການສຶກສາໃນທ້ອງຖິ່ນຂອງທ່ານເຊິ່ງອາດສາມາດຊ່ວຍໄດ້. ນອກຈາກນັ້ນ. ໂຮງຮຽນຂອງທ່ານສາມາດໃຫ້ຂໍ້ມູນຕິດຕໍ່ກັບຫ້ອງການການສຶກສາທ້ອງຖິ່ນຂອງທ່ານທີ່ອາດຈະສາມາດຊ່ວຍໄດ້. ນອກຈາກນັ້ນ, ໃຫ້ຄິດກ່ຽວກັບການໂອ້ລົມກັບນາຍໝໍຂອງລູກຂອງທ່ານຖ້າທ່ານຄິດວ່າມັນອາດຈະມີເຫດຜົນທາງການແພດໃນຄວາມກັງວົນຂອງທ່ານ.

ມີຂໍ້ມູນເພີ່ມເຕີມໄວ້ໃຫ້ ກ່ຽວກັບ ການສະໜັບສະໜູນລູກຂອງທ່ານ, ເຊັ່ນດຽວກັນກັບ ກົດບັດຊຸມຊົນໂຮງຮຽນ ທີ່ອະທິບາຍວິທີການສື່ສານກັບໂຮງຮຽນກໍມີໃຫ້ອີກນຳ.

### ຂ້ອຍສາມາດໄດ້ຮັບຂໍ້ມູນຫຍັງແດ່ຈາກໂຮງຮຽນ?

ທ່ານສາມາດສອບຖາມເອົາຂໍ້ມູນເພີ້ມເຕີມ ກ່ຽວກັບສິ່ງທີ່ເກີດຂຶ້ນແລະເຫດຜົນຈາກໂຮງຮຽນໄດ້. ໂຮງຮຽນຄວນອະທິບາຍໃຫ້ທ່ານຮູ້ເຫດຜົນຢູ່ເບື້ອງຫຼັງການຕັດສິນໃຈໃດໆ ການດຳເນີນການທີ່ຈະເກີດຂຶ້ນ

### ບໍລິການນາຍພາສາທາງໂທລະສັບ

ຖ້າທ່ານຕ້ອງການຕິດຕໍ່ກັບໂຮງຮຽນ ແລະຕ້ອງການຄວາມຊ່ວຍເຫຼືອດ້ານພາສາອັງກິດ ກະລຸນາໂທຫາບໍລິການນາຍພາສາທາງໂທລະສັບ ເບີ 131 450, ບອກພວກເຂົາວ່າທ່ານຕ້ອງການພາສາໃດ ແລະຂໍໃຫ້ຜູ້ຮັບສາຍໂທຫາໂຮງຮຽນ. ຜູ້ໂຮງຮຽນ. ຜູ້ຮັບສາຍຈະຊອກຫານາຍພາສາຢູ່ໃນສາຍເພື່ອຊ່ວຍທ່ານໃນການສົນທະນາຂອງທ່ານ. ທ່ານຈະບໍ່ຖືກເກັບຄ່າທ່ານ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.